# ເຄື່ອງມືການຮຽນດ້ວຍຕົນເອງ

## ການຮຽນດ້ວຍຕົນເອງ

ປື້ມຝຶກອົບຮົມສຳລັບສຳມະນາກອນປະກອບມີໂມດູນການຮຽນດ້ວຍຕົນເອງ ພ້ອມທັງກິດຈະກຳເພື່ອໃຫ້ຄູຮຽນດ້ວຍຕົນເອງ. ກິດຈະກຳເຫຼົ່ານີ້ແມ່ນສ້າງມາ ແລະ ເພື່ອສືບຕໍ່ການຮຽນຂອງຄູຈາກການຝຶກອົບຮົມແບບເຊິ່ງໜ້າ.



ການຮຽນດ້ວຍໂຕເອງຈະຊ່ວຍໃຫ້ທ່ານ:

> ພັດທະນາທັກສະການສອນໃນຂົງເຂດດັ່ງຕໍ່ໄປນີ້: ການຄຸ້ມຄອງຫ້ອງຮຽນ, ການຮຽນຮ່ວມ, ການຖາມຄຳຖາມ ແລະ ການປະເມີນ.

> ສະທ້ອນຄືນການສອນຂອງທ່ານ.

> ການກະກຽມຫ້ອງຮຽນຂອງທ່ານສຳລັບສົກຮຽນໃໝ່.

## ວິດີໂອສຳລັບການພັດທະນາຄູ

ຊ່ອງຢູທູບນີ້ປະກອບມີ ວິດີໂອການຝຶກອົບຮົມເພື່ອຊ່ວຍເຫຼືອຄູໃນການນຳໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່.



ວິດີໂອສຳລັບການພັດທະນາຄູຈະຊ່ວຍໃຫ້ທ່ານ:

> ເຂົ້າໃຈເນື້ອໃນທີ່ສຳຄັນຂອງຫຼັກສູດສະບັບປັບປຸງໃໝ່.

> ຄົ້ນພົບເຕັກນິກການສອນແບບໃໝ່, ກິດຈະກຳການຮຽນ ແລະ ກິດຈະກຳການພັດທະນາວິຊາຊີບ.

> ເບິ່ງການສາທິດຕົວຈິງໃນຫ້ອງຮຽນ.

> ນຳໃຊ້ດົນຕີ ແລະ ເພງໃນຫ້ອງຮຽນຂອງທ່ານ.

**ທ່ານສາມາດເຂົ້າເບິ່ງວິດີໂອໄດ້ໂດຍການ:**

ສະແກນ ຄິວອາໂຄດ

ຫຼື

YouTube

ຄົ້ນຫາ "ວິດີໂອສຳລັບການພັດທະນາຄູ Teacher Development Videos" ໃນຊ່ອງຢູທູບ

# 8 ເຄັດລັບສຳລັບຄູ ເພື່ອກຽມຄວາມພ້ອມສຳລັບສົກຮຽນໃໝ່

ອ່ານ ແລະ ທຳຄວາມເຂົ້າໃຈກ່ຽວກັບສື່ການຝຶກອົບຮົມ, ຄູ່ມືຄູ ແລະ ປື້ມແບບຮຽນທັງໝົດ ກ່ອນມື້ເປີດສົກຮຽນໃໝ່

ປະດັບປະດາຫ້ອງຮຽນຂອງທ່ານດ້ວຍໂພສເຕີ້ ແລະ ເພີ່ມສີສັນໃນຫ້ອງຮຽນ ເພື່ອໃຫ້ມີຄວາມໜ້າສົນໃຈ ແລະ ດຶງດູດຫຼາຍຂຶ້ນ

ກະກຽມປື້ມບັນທຶກຂອງແຕ່ລະວິຊາ ເພື່ອບັນທຶກການປະເມີນໂດຍການນຳໃຊ້ເກນການປະເມີນ

ນຳໃຊ້ປື້ມຄູ່ມືຄູ ເພື່ອວາງແຜນບົດສອນຂອງທ່ານ, ບໍ່ພຽງແຕ່ນຳໃຊ້ປື້ມແບບຮຽນ ໃນການວາງແຜນເທົ່ານັ້ນ

ເບິ່ງວິດີໂອການຝຶກອົບຮົມຄູ ເພື່ອປັບປຸງເຕັກນິກການສອນຂອງທ່ານ

ກວດເບິ່ງສື່ການຮຽນການສອນທີ່ທ່ານມີຢູ່ໂຮງຮຽນ ແລະ ເບິ່ງວ່າສື່ການຮຽນການສອນໃດທີ່ທ່ານສາມາດເຮັດດ້ວຍຕົນເອງ

ຈັດຫ້ອງຮຽນເພື່ອເຮັດກິດຈະກຳເປັນກຸ່ມ

ເລີ່ມກະກຽມກິດຈະກຳການຮຽນຮູ້ດ້ວຍຕົນເອງ

Australian Aid

European Union

ແຜນງານບີຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ

> ສຳລັບຄູຊັ້ນປະຖົມສຶກສາ
> ສຳລັບຜູ້ອຳນວຍການຊັ້ນປະຖົມສຶກສາ
> ສຳລັບຄູສຶກສານິເທດ

# ການພັດທະນາວິຊາຊີບແບບຕໍ່ເນື່ອງ

ການສະໜັບສະໜູນຄູໃນການພັດທະນາຄວາມຮູ້ ແລະ ທັກສະສຳລັບການສອນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່





# ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ

ຄູຊັ້ນປະຖົມສຶກສາ, ຜູ້ອຳນວຍການໂຮງຮຽນ, ຄູສຶກສານິເທດ ຫຼື ຄູຝຶກປະຈຳແຂວງ ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ ແລະ ຕໍ່ຄວາມສຳເລັດຂອງນັກຮຽນ.

ແນ່ນອນທີ່ສຸດວ່າ, ການຄົ້ນຄວ້າວຽກງານການສຶກສາໄດ້ສະແດງໃຫ້ເຫັນວ່າ ຄຸນນະພາບການສອນ ແລະ ຜູ້ນຳໂຮງຮຽນແມ່ນປັດໄຈສຳຄັນໃນການປັບປຸງຜົນການຮຽນຂອງນັກຮຽນ.

ເພື່ອໃຫ້ຄູສາມາດສອນຢ່າງມີປະສິດຕິພາບທີ່ສຸດ, ຄູຕ້ອງສືບຕໍ່ຂະຫຍາຍຄວາມຮູ້ ແລະ ທັກສະຂອງຕົນຢ່າງບໍ່ຢຸດຢັ້ງ.

ຄູຊັ້ນປະຖົມສຶກສາຕ້ອງສືບຕໍ່ຮຽນພາຍຫຼັງການຝຶກອົບຮົມຫຼັກສູດສະບັບປັບປຸງໃໝ່ ແລະ ຕ້ອງການການສະໜັບສະໜູນແບບຕໍ່ເນື່ອງຕະຫຼອດສົກຮຽນເພື່ອເປັນແນວທາງໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່.

ມີຫຼາຍເຄື່ອງມືທີ່ໄດ້ຖືກພັດທະນາຂຶ້ນເພື່ອສະໜັບສະໜູນຄູຢູ່ໂຮງຮຽນ ແລະ ຂັ້ນທ້ອງຖິ່ນເພາະພວກເຂົາຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່ໃນຫ້ອງຮຽນຂອງພວກເຂົາ.

ເຄື່ອງມືເຫຼົ່ານີ້ຖືກພັດທະນາຂຶ້ນໂດຍມີຈຸດປະສົງໃຫ້ຖືກນຳໃຊ້ໂດຍຄູ, ຜູ້ອຳນວຍການ, ຄູສຶກສານິເທດ, ຄູຝຶກປະຈຳແຂວງ ທີ່ກ່ຽວຂ້ອງ.

## ຄູສາມາດຂໍການສະໜັບສະໜູນຈາກໃຜ?

- ຜູ້ອຳນວຍການຂອງທ່ານ
- ເພື່ອນຮ່ວມງານຂອງທ່ານ
- ຄູສຶກສານິເທດ
- ຄູ ຂັ້ນ ປ.1 ຜູ້ທີ່ເຄີຍໃຊ້ຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່
- ຄູທ່ານອື່ນໆຈາກໂຮງຮຽນຂອງທ່ານ
- ຄູຝຶກປະຈຳແຂວງ
- ຖ້າຄູມີກິດຈະກຳຮອບວຽນຂອງການຮຽນ
- ກຸ່ມຮຽນຜ່ານວ໋ອດແອັບຂອງທ່ານ
- ຄູປະຖົມທ່ານອື່ນໆໃນເມືອງຂອງທ່ານ

## ມີສື່ຫຍັງແດ່ທີ່ມີສຳລັບການພັດທະນາວິຊາຊີບແບບຕໍ່ເນື່ອງ?

> ປື້ມຝຶກອົບຮົມສຳລັບສຳມະນາກອນ
> ເຄື່ອງມືໃນການຊ່ວຍເຫຼືອໃນພາກຮຽນ
> ຄຳແນະນຳ ແລະ ຮູບແບບບົດສອນ
> ວີດີໂອ

> ປື້ມແບບຮຽນ
> ຄູ່ມືຄູ
> ຊຸດອຸປະກອນສຳລັບຄູ

ຖ້າຫາກທ່ານບໍ່ມີ ຫຼື ບໍ່ຮູ້ວິທີເຂົ້າເຖິງສື່ເຫຼົ່ານີ້ ໃຫ້ລົມກັບຜູ້ອຳນວຍການຂອງທ່ານ, ຄູສຶກສານິເທດ ຫຼື ພະນັກງານຂັ້ນເມືອງຂອງທ່ານອື່ນໆ.

# ເຄື່ອງມືໃນການຊ່ວຍເຫຼືອໃນພາກຮຽນ

5 ວິທີການ ແລະ ເຄື່ອງມືໃນການພັດທະນາວິຊາຊີບແບບຕໍ່ເນື່ອງມີດັ່ງນີ້:

### ການສັງເກດການສອນຂອງຄູໃນຫ້ອງຮຽນໂດຍຜູ້ອຳນວຍການ ຫຼື ຄູສຶກສານິເທດ



ການສັງເກດການສອນໃນຫ້ອງຮຽນນີ້ຈະຊ່ວຍໃຫ້ທ່ານ:

> ໄດ້ຮັບຄຳຄິດເຫັນໃນທາງສ້າງສັນ
> ປັບປຸງຄຸນນະພາບການສອນ
> ເນັ້ນໃສ່ຂົງເຂດສຳຄັນບ່ອນທີ່ຕ້ອງການ ການສະໜັບສະໜູນ
> ເລືອກເອົາວິທີການເພື່ອແກ້ໄຂບັນຫາການສອນທີ່ທ້າທາຍ

### ການກະກຽມ ແລະ ການສອນໂດຍຄູ 2 ທ່ານ



ການສອນເປັນທີມນີ້ຈະຊ່ວຍໃຫ້ທ່ານ:

> ຄົ້ນພົບກິດຈະກຳໃໝ່ໃນຫ້ອງຮຽນ
> ແກ້ໄຂບັນຫາການສອນທີ່ທ້າທາຍ
> ຮຽນຮູ້ຈາກຄູທ່ານອື່ນທີ່ມາສອນຮ່ວມ
> ສັງເກດ ແລະ ສາທິດເຕັກນິກການສອນແບບໃໝ່ ແລະ ການຈັດກິດຈະກຳ
> ເປັນວິທີທີ່ດີທີ່ສຸດສຳລັບຄູໃໝ່ ທີ່ຈະໄດ້ຮັບການຊ່ວຍເຫຼືອໃນການສອນ

*ມີເຕັກນິກການສອນແບບເປັນທີມຫຼາຍເຕັກນິກ ທີ່ທ່ານສາມາດເຂົ້າເບິ່ງໄດ້ຕາມຄວາມຕ້ອງການຂອງທ່ານ*




ຂຽນກິດຈະກຳການພັດທະນາວິຊາຊີບແບບຕໍ່ເນື່ອງທີ່ທ່ານໄດ້ຝຶກ ຫຼື ທ່ານຕ້ອງການທົດລອງໃຊ້ໃສ່ບ່ອນນີ້:

### ປະຊຸມກຸ່ມເປັນປະຈຳ ເຊິ່ງໃນກຸ່ມໜຶ່ງແມ່ນມີຄູປະມານ 3 – 12 ທ່ານ ເພື່ອສະໜັບສະໜູນການສອນເຊິ່ງກັນ ແລະ ກັນ - ຫົວຂໍ້ການປະຊຸມແມ່ນອີງໃສ່ຄວາມຕ້ອງການການຮຽນຂອງບັນດາຄູ



ຮອບວຽນຂອງການຮຽນນີ້ຈະຊ່ວຍໃຫ້ທ່ານ:

> ສະທ້ອນຄືນການສອນຂອງທ່ານ
> ແບ່ງປັນປະສົບການ ການສອນທີ່ປະຕິບັດໄດ້ດີ ແລະ ສິ່ງທ້າທາຍ
> ແກ້ໄຂບັນຫາທີ່ຫຍຸ້ງຍາກຮ່ວມກັນ
> ຮຽນຮູ້ຄວາມຄິດ ແລະ ເຕັກນິກການສອນໃໝ່ໆ

### ຄູ, ຜູ້ອຳນວຍການ ແລະ ຄູສຶກສານິເທດ ແມ່ນຢູ່ໃນກຸ່ມວ໋ອດແອັບທີ່ທ່ານສາມາດຮຽນຮູ້, ຂໍຄວາມຊ່ວຍເຫຼືອ ແລະ ຖາມຄຳຖາມ



ໃນກຸ່ມວ໋ອດແອັບນີ້ຈະຊ່ວຍໃຫ້ທ່ານ:

> ແກ້ໄຂສິ່ງທ້າທາຍໃນການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່
> ຖາມຄຳຖາມທີ່ທ່ານມີກ່ຽວກັບຫຼັກສູດສະບັບປັບປຸງໃໝ່
> ແບ່ງປັນເລື່ອງລາວທີ່ປະສົບຜົນສຳເລັດນຳເພື່ອນຮ່ວມງານຂອງທ່ານ
> ຊອກຮູ້ວ່າຄູທ່ານອື່ນໆ ເຮັດຫຍັງແດ່ໃນຫ້ອງຮຽນຂອງພວກເຂົາ

### ຄູສອງທ່ານຈັບຄູ່ກັນເພື່ອສະໜັບສະໜູນເຊິ່ງກັນ ແລະ ກັນ



ການຈັບຄູ່ຈະຊ່ວຍໃຫ້ທ່ານ:

> ແບ່ງປັນປະສົບການ ການສອນທີ່ເຮັດໄດ້ດີ
> ແກ້ໄຂບັນຫາການສອນສະເພາະຮ່ວມກັນ
> ສົ່ງເສີມ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນ

*ຄູໄດ້ຈັບຄູ່ກັບເພື່ອນຮ່ວມງານໃນລະຫວ່າງການຝຶກອົບຮົມແບບເຊິ່ງໜ້າ*